ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******

ທະນາຄານແຫ່ງ ສ.ປ.ປ.ລາວ
ຫ້ອງການ

ເລກທີ : 619/ທຫ

ນະຄອນຫຼວງວຽງຈັນ, ວັນທີ 7 ທັນວາ 2006

## ແຈ້ງການ
## ກ່ຽວກັບໜັງສືຄ້ຳປະກັນ

ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງໃຫ້ມວນຊົນທັງພາຍໃນ ແລະ ຕ່າງປະເທດຊາບທົ່ວເຖິງກັນວ່າ: ປະຈຸບັນມີກຸ່ມຄົນບໍ່ດີ ສ້າງບັນດາໜັງສືຄ້ຳປະກັນປອມຂຶ້ນ ຫຼາຍຮູບແບບ ທີ່ອ້າງວ່າອອກໃນນາມຜູ້ວ່າການທະນາຄານ ແຫ່ງ ສປປລາວ ເພື່ອໄປອີງເຕັ້ນລອກລວງປະຊາຊົນ ແລະ ສະຖາບັນການເງິນທັງພາຍໃນ ສປປລາວ ແລະ ຕ່າງປະເທດ ເພື່ອຫວັງທຳລາຍພາບພົດຂອງ ທະນາ ຄານ ແຫ່ງ ສປປລາວ ກໍ່ຄືລັດຖະບານລາວ.

ສະນັ້ນ, ທະນາຄານ ແຫ່ງ ສປປລາວ ຂໍແຈ້ງໃຫ້ທ່ານຊາບວ່າ: Bank Guarantees, Standby L/C, Sovereign Guarantee ແລະ Safe Keeping Receipt ທີ່ອ້າງວ່າອອກໃນນາມຜູ້ວ່າການທະນາຄານ ແຫ່ງ ສປປລາວ ໃນໄລຍະຜ່ານມາ ເປັນເອກະສານທີ່ບໍ່ມີຄຸນຄ່າ ແລະ ເປັນເອກະສານທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

ສະນັ້ນ, ທະນາຄານແຫ່ງ ສປປລາວ ຈຶ່ງແຈ້ງໃຫ້ຊາບທົ່ວເຖິງກັນ.

ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ

ອໍ້ ວິລະພັນ

ທະນາຄານແຫ່ງ ສ.ປ.ປ.ລາວ, ຖະໜົນ ຍອນເນ, ນະຄອນຫລວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ: 4304 BNL.VTE.LS ໂທລະສານ: (856)-21-213108 ໂທລະສັບ: 213109-213110 E-mail: Bol@pan-laos.net.la